ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ
ກອງທຶນຫລຸດຜ່ອນຄວາມທຸກຍາກ ໄລຍະ II
ໂຄງການປັບປຸງຊີວິດການ   ເປັນຢູ່ເພື່ອຄ້ຳປະກັນດ້ານໂພສະນາ



# ການປັບປຸງ
# ການລ້ຽງໝູລາດຂອງ
# ຊາວກະສິກອນ

ມາຈາກຄວາມຕ້ອງການຂອງປະຊາຊົນ

ໂດຍປະຊາຊົນ ແລະ

ເພື່ອຜົນປະໂຫຍດຂອງປະຊາຊົນ



# ສາລະບານ

1. ການປັບປຸງການລ້ຽງໝູຂອງຊາວກະສິກອນ.................4

1.1 ການລ້ຽງໝູຂອງຊາວຊົນນະບົດ.................................4

2. ດ້ານເຕັກນິກການຈັດການ.........................................5

3. ການປັບປຸງທາງດ້ານ ອາຫານ......................................7

5. ດ້ານການນັກສາ ສຸຂະພາບ.........................................10

# 1. ການປັບປຸງການລ້ຽງໝູຂອງຊາວກະສິກອນ



## 1.1 ການລ້ຽງໝູຂອງຊາວຊົນນະບົດ

ໝູພື້ນເມືອງເປັນສັດລ້ຽງທີ່ຢູ່ກັບຊາວກະສິກອນລາວເຮົາມາແຕ່ດົນນານແລ້ວ ຊຶ່ງທ່າແຮງຂອງໝູພື້ນເມືອງແມ່ນມີຄວາມເໝາະສົມລ້ຽງແບບເປັນຟາມຂະໜາດນ້ອຍໃນລະບົບການຜະລິດຂອງຊາວກະສິກອນ ເພາະວ່າຈຸດດີຂອງໝູພື້ນເມືອງ ແມ່ນ ສາມາດປັບໂຕເຂົ້າກັບສະພາບແວດລ້ອມຂອງລາວເຮົາໄດ້ດີ ແລະ ຍັງສາມາດນຳໃຊ້ອາຫານຄຸນນະພາບຕ່ຳທີ່ມີໃນທ້ອງຖິ່ນໄດ້ດີ, ຊຶ່ງສະແດງອອກຢູ່ບ່ອນວ່າ ພາຍໃຕ້ສະພາບການດັ່ງກ່າວນັ້ນ ໝູລາດແມ່ນມີການຈະເລີນເຕີບໂຕ ແລະ ໃຫ້ຜົນຜະລິດ ໄດ້ ດີກວ່າໝູພັນຕ່າງປະເທດ. ນອກນັ້ນ ປະຊາຊົນລາວ ໂດຍສະເພາະແມ່ນຢູ່ໃນເຂດພູດອຍ ແມ່ນມີຄວາມນິຍົມບໍລິໂພກຊີ້ນໝູພື້ນເມືອງ ຫລາຍ ກວ່າໝູພັນ ແລະ ທ່າແຮງຄວາມຕ້ອງການຂອງຕະຫລາດພາຍນອກຈາກຕ່າງປະເທດກໍຍັງມີທິດທາງ






ຢາຂ້າແມ່ທ້ອງທີ່ມີຄຸນນະພາບດີ ແລະ ລາຄາຖືກ ແມ່ນຢາ ເມບັນດາໂຊນ, ຟາຣມິນ, ປີເປີວອມ ທີ່ສາມາດຫາຊື້ໄດ້ງ່າຍຕາມຮ້ານຂາຍຢາປົວສັດ ແລະ ຮ້ານຂາຍຢາທົ່ວໄປ. ສິ່ງສຳຄັນໃນການຂ້າແມ່ທ້ອງ ແມ່ນຕ້ອງໃຫ້ສັດກິນຢາໃນປະລິມານທີ່ຖືກຕ້ອງຕາມນ້ຳໜັກໝູ.

ຢາເມເບນດາໂຊນ 1 ເມັດປະມານ 500 ມິລິກຣາມ, ຊຶ່ງພຽງພໍສຳລັບໝູນ້ອຍທີ່ມີນ້ຳໜັກໂຕເຖິງ 25 ກິໂລກຣາມ. ສ່ວນໝູແມ່ພັນທີ່ມີນ້ຳໜັກຫລາຍອາດຕ້ອງໃຊ້ຢາປະມານ 3-4 ເມັດ. ໃນບາງຄັ້ງມີການນຳໃຊ້ຢາ ໄອໂວເມັກຕິນ ສຳລັບການຂ້າແມ່ທ້ອງໃຫ້ໝູ ເພາະວ່າມັນສາມາດຂ້າແມ່ທ້ອງທັງພາຍໃນ ແລະ ພາຍນອກ. ການສັກຢາໄອໂວເມກຕິນ ແມ່ນຕ້ອງສັກລືບໜັງໃນອັດຕາ 1 ມິລີລິດ/10 ກິໂລ ນ້ຳໜັກໝູ. ເຖິງຢ່າງໃດກໍຕາມຄວນກວດເບິ່ງ ແລະ ປະຕິບັດຕາມຄຳແນະນຳທີ່ມີຢູ່ໃນສະຕິກເກີຂອງແກ້ວຢາ ເພື່ອເຮັດໃຫ້ໄດ້ຜົນຢ່າງມີປະສິດທິພາບ.

ນະຄອນຫລວງວຽງຈັນ, ວັນທີ 16 ມິຖຸນາ 2014

ລຽບລຽງໂດຍ:

ດຣ. ຈອນຈິດ ດວງພະຈັນ

ຈາຍ ກໍມີຄວາມສໍາຄັນ ທີ່ຈະເຮັດໃຫ້ ຫລຸດຜ່ອນທັງການແຜ່ ລະບາດ ແລະ ການຕາຍຂອງໝູ ລົງອີກດ້ວຍ.




**ຕາຕະລາງໃນການນໍາໃຊ້ ຢາວັກຊີນສໍາລັບ ໝູ**




ການຄ້າແມ່ທ້ອງໃຫ້ໝູເປັນວຽກນຶ່ງທີ່ສໍາຄັນ ແຕ່ຊາວກະ ສິກອນສ່ວນໃຫຍ່ແມ່ນຖືເບົາ. ການຂ້າແມ່ທ້ອງຈະເຮັດ ໃຫ້ໝູໃຫຍ່ໄວ,ສຸຂະພາບແຂງແຮງ ແລະ ທົນທານຕໍ່ການຕິດແປດພະຍາດອື່ນໆອີກດ້ວຍ. ການຂ້າແມ່ທ້ອງສ່ວນຫລາຍ ແມ່ນຈະເຮັດກັບໝູນ້ອຍ ໂດຍສະເພາະແມ່ນໃນໄລຍະກ່ອນເອົາຂຶ້ນຄອກທອມເພາະຈະເຮັດໃຫ້ໝູນ້ອຍເຕີບໂຕໄດ້ດີກວ່າໂຕທີ່ບໍ່ໄດ້ຂ້າແມ່ທ້ອງ, ນອກຈາກນັ້ນ ການຂ້າແມ່ທ້ອງໃຫ້ໝູແມ່ພັນ ໃນໄລຍະ 2 ອາທິດກ່ອນຈະເອົາມັນເຂົ້າຄອກເກີດລູກ ກໍຈະຊ່ວຍໃຫ້ການຕິດເຊື້ອແມ່ທ້ອງຂອງໝູນ້ອຍເກີດໃໝ່ຫລຸດຕໍ່າລົງ ແລະ ຊ່ວຍໃຫ້ໝູນ້ອຍໃຫຍ່ໄວ.



ທີ່ຈະສູງຂື້ນ. ເຖິງຢ່າງໃດກໍຕາມ,ເພື່ອເຮັດໃຫ້ການຜະລິດໝູພື້ນເມືອງແບບເປັນຟາມຂະໜາດນ້ອຍ ໃນລະບົບການລ້ຽງຂອງຊາວກະສິກອນ ໃຫ້ໄດ້ຮັບຜົນສໍາເລັດ ຄວນເອົາໃຈໃສ່ບາງບັນຫາທີ່ສໍາຄັນດັ່ງນີ້:

## 2. ດ້ານເຕັກນິກການຈັດການ .

ການຫັນປ່ຽນລະບົບການລ້ຽງແບບປ່ອຍມາເປັນການລ້ຽງແບບຂັງຄອກ ຫລື ຂັງບໍລິເວນແມ່ນເປັນປັດໃຈທີ່ສໍາຄັນໃນການປັບປຸງການລ້ຽງໝູຂອງຊາວກະສິກອນ ເພື່ອເຮັດໃຫ້ການຄຸ້ມຄອງຈັດການດີຂື້ນ, ຫລຸດຜ່ອນ



ຄວາມສ່ຽງການເກີດພະຍາດ, ຫລີກລ້ຽງການປະສົມພັນໃນສາຍເລືອດດຽວກັນ,ໄດ້ກິນອາຫານທີ່ມີຄຸນນະພາບ ແລະ ພຽງພໍກັບຄວາມຕ້ອງການ ຊຶ່ງທັງໝົດນັ້ນຖືວ່າເປັນປັດໃຈສໍາຄັນໃນການລ້ຽງໝູຂອງຊາວກະສິກອນໃນປັດຈຸບັນນີ້.

## ການລ້ຽງແບບປະປ່ອຍຕາມທໍາມະຊາດ



ດັ່ງນັ້ນ, ການລ້ຽງໝູໃຫ້ຖືກຕາມເຕັກນິກຈຶ່ງມີຄວາມສຳຄັນຫລາຍ ເຊັ່ນ: ເຕັກນິກການສ້າງຄອກຕ້ອງໃຫ້ຖືກຈຸດປະສົງຂອງການຜະລິດຄື: ການສ້າງຄອກເພື່ອລ້ຽງໝູທອມຂາຍ ຫລື ການສ້າງຄອກສຳລັບການລ້ຽງໝູເພື່ອຜະລິດໝູນ້ອຍຂາຍ.

## ການລ້ຽງໝູແບບຂັງໃສ່ຄອກ

ຄຽງຄູ່ກັນນັ້ນ ການສ້າງຮາງອາຫານທີ່ດີກໍ່ມີຄວາມສຳຄັນເພື່ອປ້ອງກັນການຕົກເຮັ່ຍເສັຍຫາຍໃນເວລາເກືອໝູ, ການຕອບສະໜອງນ້ຳຢ່າງພຽງພໍກໍ່ມີຄວາມຈຳເປັນ ໂດຍສະເພາະແມ່ນໃນໄລຍະໝູແມ່ທີ່ກຳລັງຜະລິດນ້ຳນົມລ້ຽງລູກ.

ການຄັດເລືອກ ແລະ ນຳໃຊ້ໝູພໍ່ແມ່ພັນທີ່ຖືກຕ້ອງຕາມເຕັກນິກກໍ່ແມ່ນອີກດ້ານນຶ່ງທີ່ສຳຄັນໃນການປັບປຸງການລ້ຽງໝູ ເພື່ອການຜະລິດໝູເພື່ອໃຫ້ໄດ້ທາງດ້ານປະລິມານ ແລະ ຄຸນນະພາບ. ການຄັດເລືອກ ແລະ ນຳໃຊ້ໝູພໍ່ແມ່ພັນທີ່ດີຈະຊ່ວຍໃຫ້ໝູເກີດລູກຫລາຍໂຕ ໝູນ້ອຍແຂງແຮງດີ;



ອາດຄອກ ຫລື ສະຖານທີ່ລ້ຽງໝູ,ສ້າງກອງທຶນຢາປ້ອງກັນ ແລະ ປິ່ນປົວຂອງບ້ານ ແນ່ໃສ່ການເຂົ້າເຖິງຢາປ້ອງກັນ ແລະ ປິ່ນປົວ ຂອງຊາວກະສິກອນ,ຄວາມຮູ້ໃນການເກັບຮັກສາ ແລະ ນຳໃຊ້ຢາປ້ອງກັນຢ່າງຖືກຕ້ອງຕາມເຕັກນິກ ຈະຊ່ວຍໃຫ້ຫລຸດຜ່ອນອັດຕາການຕາຍຂອງໝູລົງໄດ້. ໃນກໍລະນີຊື້ ຫລື ນຳໝູຈາກບ່ອນອື່ນມາລ້ຽງ ຄວນຈະເລືອກຊື້ຈາກບ່ອນທີ່ມີຄວາມເຊື່ອຖື ແລະ ບ່ອນທີ່ບໍ່ມີພະຍາດເກີດຂື້ນ.

ຫລັງຈາກຊື້ມາແລ້ວກໍຕ້ອງແຍກໝູອອກລ້ຽງຢູ່ຄອກສະເພາະ ເຊີ່ງຫ່າງໄກ ຈາກໝູໂຕອື່ນ ແລະ ຕິດຕາມເບິ່ງອາການຂອງໝູ 2-4 ອາທິດ ຖ້າເຫັນວ່າໝູປົກກະຕິ ແຂງ ແຮງດີແລ້ວຈຶ່ງສັກຢາປ້ອງກັນ ແລ້ວນຳມາລ້ຽງຮ່ວມກັບໝູໂຕອື່ນໄດ້.

| ລ/ດ | ຊະນິດ ຢາວັກຊີນ | ອາຍຸສັດ | ວິທີໃຊ້ | ໄລຍະ ຄຸ້ມກັນ |
|---|---|---|---|---|
| 1 | ອະຫິວາ ໝູ | 3 ເດືອນ ຂື້ນໄປ | ຢາກ້ອງ 10 ເຂັມປະສົມ ນ້ຳກັ່ນ 10 ຊີຊີ, ສັກ 1 ຊີຊີ/ໂຕ (ສັກກ້າມຊີ້ນ) ຫ້າມສັກຢາກັບໝູຖືພາ | 6 ເດືອນ |
| 2 | ຫູກ່ຳ | 1 ເດືອນ ຂື້ນໄປ | ຢາກ້ອງ 10 ເຂັມ ປະສົມນ້ຳກັ່ນ 10 ຊີຊີ, ສັກ 2 ຊີຊີ/ໂຕ (ສັກກ້າມຊີ້ນ) | 6 ເດືອນ |
| 3 | ປາກ ເປື່ອຍ ລົງເລັບ | 2 ເດືອນ ຂື້ນໄປ | ຢາກ້ອງ 20,50,100,150 ຊີຊີ. ສັກ 2 ຊີຊີ/ໂຕ (ສັກກ້າມຊີ້ນ) | 12 ເດືອນ |

ນອກຈາກການສ້າງຄວາມຮູ້ໃນການປ້ອງກັນພະຍາດໃຫ້ຊາວກະສິກອນແລ້ວ ການສັກຢາປ້ອງກັນຢ່າງເປັນປົກກະຕິ ແລະ ຕາມຄາດໝ

ກັບການລ້ຽງໝູນ້ອຍແບບທຳມະຊາດມີການຈະເລີນເຕີບໂຕພຽງ 20-25 ກຣາມຕໍ່ມື້ເທົ່ານັ້ນ.

ຕົ້ນໝາກຖົ່ວເຫລືອງ ເມັດໃນໝາກຖົ່ວເຫລືອງ

ຕົ້ນຖົ່ວສະຕາຍໂລ

## 5. ດ້ານການນັກສາສຸຂະພາບ




ການສ້າງຄວາມເຂັ້ມແຂງ ທາງດ້ານຄວາມຮູ້ທາງດ້ານການຮັກສາສຸຂະພາບສັດໃຫ້ແກ່ຊາວກະສິກອນ ໂດຍສະເພາະແມ່ນການປ້ອງກັນພະຍາດ,ເອົາໃຈໃສ່ຈຳກັດການເຄື່ອນຍ້າຍສັດທີ່ເຈັບເປັນພາຍໃນບ້ານ ຫລືມາຈາກເຂດໄກ້ຄຽງ ແລະ ບ່ອນອື່ນໆທີ່ມີຄວາມສ່ຽງຕໍ່ການລະບາດຂອງພະຍາດນັ້ນແມ່ນເປັນປັດໃຈອັນສຳຄັນຕົ້ນຕໍ່ໃນການຫລຸດຜ່ອນຄວາມສ່ຽງທີ່ເຮັດໃຫ້ໝູນ້ອຍຕາຍລຸດລົງໃນລະບົບການລ້ຽງຂອງຊາວກະສິກອນ.

ດັ່ງນັ້ນ, ຕ້ອງໄດ້ມີການຈັດຕັ້ງ ແລະ ສ້າງບັນດາເງື່ອນໄຂສິ່ງອຳນວຍຄວາມສະດວກຕ່າງໆເຊັ່ນ: ການອະນາໄມ ແລະ ຮັກສາຄວາມສະ





ຫລືວ່າເຕັກນິກການຢ່ານົມໝູນ້ອຍຈາກແມ່ທີ່ໄວຂຶ້ນ ກໍ່ຊ່ວຍໃຫ້ໝູແມ່ກັບມາປະສົມພັນໄວຂຶ້ນ ແລະ ຊ່ວຍເພີ້ມຮອບວຽນການຜະລິດໝູໄດ້ຫລາຍຂື້ນ.

<u>ການຄັດເລືອກແນວພໍ່ພັນທີ່ດີ</u>

## 3. ການປັບປຸງທາງດ້ານອາຫານ

ອາຫານທີ່ນຳໃຊ້ລ້ຽງໝູພື້ນເມືອງ ສ່ວນໃຫຍ່ແມ່ນນຳໃຊ້ອາຫານທຳມະຊາດທີ່ຫາໄດ້ຕາມທ້ອງຖິ່ນທີ່ມາຈາກສິ່ງເສດເຫລືອ ແລະ ການຜະລິດກະສິກຳຊຶ່ງອາຫານເລົ່ານີ້ ສວນໃຫຍ່ແລ້ວແມ່ນມີຄຸນຄ່າທາງດ້ານທາດອາຫານຕ່ຳ ໂດຍສະເພາະແມ່ນປະກອບມີທາດໂປຣຕີນຕ່ຳບໍ່ພຽງພໍກັບຄວາມຕ້ອງການຂອງໝູ ເຖິງວ່າໃບພືດຜັກທຳມະຊາດບາງຊະນິດຈະມີທາດໂປຣຕີນສູງ ແຕ່ກໍມີເຍື້ອໄຍສູງ ເວລາກິນເຂົ້າໄປແລ້ວເຮັດໃຫ້ບໍ່ສາມາດຍ່ອຍ

ເພື່ອນຳເອົາທາດອາຫານມາໃຊ້ປະໂຫຍດໃນຮ່າງກາຍໄດ້. ດັ່ງນັ້ນ ທາງເລືອກໃນການປັບປຸງອາ .ຫານໝູກໍ່ຄືການແນະນຳປູກຖົ່ວອາຫານສັດຕ່າງໆທີ່ມີຄຸນນະພາບ ເຊັ່ນ: ຖົ່ວສະໄຕໂລຈຶ່ງເປັນເຕັກນິກນຶ່ງທີ່ສາມາດຊ່ວຍປັບປຸງຄຸນນະພາບອາຫານ ຊ່ວຍເພີ້ມອັດຕາການຈະເລີນເຕີບໂຕຂອງໝູລຸ້ນທີ່ລ້ຽງທອນໂດຍສ່ວນໃຫຍ່ ການຈະເລີນເຕີບໂຕຂອງໝູລ້ຽງແບບທຳມະຊາດແມ່ນ 100 ກຣາມຕໍ່ມື້ ແຕ່ຖ້ານຳໄຊ້ຖົ່ວສະຕາຍໂລເປັນອາຫານເສີມໃນລະດັບ 20% ສາມາດຊ່ອຍປັບປຸງຂື້ນເປັນ 200-300 ກຣາມຕໍ່ມື້; ຜົນໄດ້ຮັບ



ດັ່ງກ່າວນີ້ຖືວ່າມີການປັບປຸງໃຫ້ດີຂື້ນ ແລະ ເປັນທີ່ຍອມຮັບຂອງຊາວກະສິກອນໂດຍສະເພາະຢູ່ພາກເໜືອຂອງລາວ ຕໍ່ເຕັກນິກການປັບປຸງອາຫານໝູໂດຍໂດຍນຳໃຊ້ຖົ່ວສະຕາຍໂລເພື່ອເປັນອາຫານໝູຢ່າງກ້ວາງຂວາງ.

## <u>ລຳບອນ ຫລື ລຳເຜືອກ ອາຫານໝູພື້ນບ້ານ</u>



ເຖິງຢ່າງໃດກໍ່ຕາມຄຽງຄູ່ກັບຈຸດດີຂອງ ຖົ່ວສະໄຕໂລກໍ່ຍັງມີຈຸດອ່ອນບາງດ້ານເພາະວ່າຖົ່ວສະໄຕໂລມີຄວາມຈະເລີນເຕີບໂຕໄວ ຊຶ່ງຈະປົ່ງຂື້ນໄວຫລັງຈາກການຕັດ ຖ້າຕັດຖົ່ວອາຍຸເກີນ 30 ວັນຂື້ນໄປເຮັດໃຫ້ຖົ່ວມີເຍື້ອໄຍສູງ ຊຶ່ງບໍ່ສາມາດນຳໃຊ້ເປັນອາຫານສຳລັບໝູນ້ອຍຢ່ານົມທີ່ມີນ້ຳໜັກໂຕຕ່ຳກວ່າ 20 ກິໂລກະຣາມ.ໃນການປັບປຸງອາຫານໝູນ້ອຍຢ່ານົມຈຶ່ງມີຄວາມຈຳເປັນຕ້ອງໄດ້ນຳໃຊ້ອາຫານທີ່ມີຄຸນນະພາບສູງ ຊຶ່ງການນຳໃຊ້





ຖົ່ວເຫລືອງຈຶ່ງແມ່ນອີກເຕັກນິກນຶ່ງໃນການປັບປຸງອາຫານໝູນ້ອຍຢ່ານົມທີ່ໄດ້ຮັບຜົນເຊັ່ນ: ການນຳໃຊ້ຖົ່ວເຫລືອງເປັນອາຫານໃນລະດັບ 20% ຂອງ



ອາຫານໝູນ້ອຍມີການເຕີບໂຕໄດ້ເຖິງ 120-150 ກຣາມຕໍ່ມື້ ຖ້າສົມທຽບ